# ໂຄງການ Medi-Cal ແບບບໍ່ມີຄ່າຈ່າຍຮ່ວມ ສໍາລັບເດັກຜູ້ພິການປະຈໍາປີ 2011

ບັນດາເດັກນ້ອຍຜູ້ພິການແມ່ນມີສິດໄດ້ຮັບ Medi-Cal ແບບບໍ່ມີຄ່າຈ່າຍຮ່ວມ ພາຍໃຕ້ໂຄງການການຊ່ວຍເຫລືອຕາມລະດັບຄວາມທຸກຍາກຂອງຜູ້ສູງອາຍຸແລະຜູ້ພິການ (Aged & Disabled Federal Poverty Level, A&D FPL). ຖ້າວ່າ ເດັກຢູ່ເໜືອລາຍໄດ້ທີ່ກໍານົດໄວ້, ເດັກນັ້ນກໍ່ຈະບໍ່ມີສິດໄດ້.[1] ແຫລ່ງລາຍໄດ້ຊັບສິນຕ້ອງຢູ່ພາຍໃນຈໍານວນທີ່ກໍານົດໄວ້ພາຍໃຕ້ SSI. ທ່ານບໍ່ສາມາດໃຊ້ຈ່າຍໃຫ້ຫລຸດລົງ ເພື່ອໃຫ້ໄດ້ສິດເໝາະສົມສໍາລັບໂຄງການນີ້ໄດ້.

ເດັກພິການທີ່ຢູ່ໃນສະພາບຄອບຄົວດັ່ງຕໍ່ໄປນີ້ ຈະມີສິດໄດ້ຮັບການຊ່ວຍເຫລືອໃນປີ 2011:

ພໍ່ຫລືແມ່ທີ່ມີລູກໜຶ່ງຄົນ: ມີສິດໄດ້ຮັບ ຖ້າວ່າລາຍໄດ້ທີ່ໄດ້ຮັບຈາກວຽກມີຈໍານວນລວມບໍ່ເກີນ $3561 ຕໍ່ເດືອນ.

ພໍ່ຫລືແມ່ທີ່ມີລູກສອງຄົນ: ມີສິດໄດ້ ຖ້າວ່າລາຍໄດ້ທີ່ໄດ້ຮັບຈາກວຽກມີຈໍານວນລວມບໍ່ເກີນ $3861 ຕໍ່ເດືອນ.

ພໍ່ແມ່ສອງຄົນທີ່ມີລູກໜຶ່ງຫລືສອງຄົນ: ມີສິດໄດ້ ຖ້າວ່າລາຍໄດ້ທີ່ໄດ້ຮັບຈາກວຽກມີຈໍານວນລວມບໍ່ເກີນ $4229 ຕໍ່ເດືອນ.

ພໍ່ແມ່ສອງຄົນທີ່ມີລູກສີ່ຄົນ: ມີສິດໄດ້ ຖ້າວ່າລາຍໄດ້ທີ່ໄດ້ຮັບຈາກວຽກມີຈໍານວນລວມບໍ່ເກີນ $4879 ຕໍ່ເດືອນ.

ຖ້າວ່າ ມີການຈ່າຍຄ່າງວດປະກັນພັຍສຸຂະພາບສໍາລັບຜູ້ໃດກໍ່ຕາມໃນຄອບຄົວ ແລະລາຍໄດ້ນັ້ນແມ່ນລາຍໄດ້ທີ່ໄດ້ຮັບຈາກວຽກ, ເພດານຈໍານວນເງິນທີ່ກໍານົດກໍ່ຈະເພີ້ມຂຶ້ນເປັນສອງເທົ່າຂອງຈໍານວນເງິນຈ່າຍຄ່າງວດປະກັນພັຍນັ້ນ.

ໂຄງການ Medi-Cal ຈະພິຈາລະນາວ່າ ເດັກຜູ້ໜຶ່ງຊຶ່ງມີເງື່ອນໄຂກົງຕາມຄໍານິຍາມດ້ານຄວາມພິການຂອງ SSI ຈະມີສິດເໝາະສົມຫລືບໍ່ ໂດຍພິຈາລະນາຕາມຂັ້ນຕອນດັ່ງນີ້: *ທໍາອິດ,* Medi-Cal ພິຈາລະນາຈໍານວນລາຍໄດ້ທີ່ນັບໄດ້ ແລະຈໍານວນລາຍໄດ້ທີ່ບໍ່ແມ່ນມາຈາກການເຮັດວຽກຂອງຄອບຄົວ. ຈໍານວນເງິນຫັກລົດ ລວມເຖິງເງິນຈ່າຍຄ່າງວດປະກັນພັຍໃດໆ ກໍ່ຕາມຂອງຄອບຄົວ. *ສອງ,* Medi-Cal ຫັກເງິນຊ່ວຍເຫລືອຄ່າໃຊ້ຈ່າຍຈໍາເປັນ (maintenance need allowance) ຂອງສະມາຊິກໃນຄອບຄົວ ຫລາຍກວ່າທີ່ຈະຫັກເງິນສໍາລັບເດັກຜູ້ພິການ. ຍົກຕົວຢ່າງ, ສໍາລັບຄອບຄົວທີ່ມີພໍ່ແມ່ສອງຄົນ ແລະລູກສີ່ຄົນ ຫລືເປັນຄອບຄົວ ທີ່ມີສະມາຊິກ 6 ຄົນ, ທາງ Medi-Cal ຈະຫັກລົດເງິນຊ່ວຍເຫລືອຄ່າໃຊ້ຈ່າຍຈໍາເປັນສໍາລັບຫ້າຄົນ ຫລື $1259. *ສາມ,* ຈໍານວນເງິນທີ່ຍັງເຫລືອນັ້ນແມ່ນຈໍານວນທີ່ຈະຖືວ່າເປັນຂອງເດັກ. *ສີ່,* ຖ້າວ່າຈໍານວນເງິນທີ່ເຫລືອນັ້ນ ມີຈໍານວນບໍ່ກາຍລະດັບ ຄວາມທຸກຍາກທີ່ຣັຖບານກາງກໍານົດໄວ້ສໍາລັບບຸກຄົນໜຶ່ງຄົນ ($908 ໃນປີ 2011) *ບວກກັບ* $230 (ຈໍານວນຫັກລາຍໄດ້ພິເສດສໍາລັບບຸກຄົນ), ເດັກກໍ່ຈະມີສິດໄດ້ຮັບ.

DHS All-County Letter Nos. 00-57, 00-68, 01-18; Welf. & Inst. Code 14005.40.

---

[1] ຖ້າວ່າ ລາຍໄດ້ຄອບຄົວແມ່ນລາຍໄດ້ທີ່ໄດ້ຮັບຈາກການເຮັດວຽກ ແລະມີຈໍານວນສູງກວ່າທີ່ກໍານົດໄວ້ເລັກນ້ອຍ, ທ່ານສາມາດລົດລາຍໄດ້ທີ່ນັບໄດ້ຂອງທ່ານໄດ້ ຖ້າວ່າມີແຜນການຜົນປະໂຫຍດສໍາລັບພະນັກງານ (cafeteria plan) ຜ່ານວຽກງານ ຊຶ່ງຊ່ວຍເຫລືອສໍາລັບຄ່າໃຊ້ຈ່າຍດ້ານການປິ່ນປົວທີ່ບໍ່ສາມາດຂໍຄືນໄດ້ ແລະຄ່າຝາກເດັກ. ຈໍານວນເງິນທີ່ເອົາໃສ່ໃນບັນຊີດັ່ງກ່າວຈະບໍ່ນັບລວມຍ້ອນວ່າທ່ານບໍ່ໄດ້ຈ່າຍພາສີປະກັນສັງຄົມ FICA ສໍາລັບເງິນນັ້ນ.

# ການພິຈາລະນາການມີສິດໄດ້ຮັບການຊ່ວຍເຫລືອຂອງເດັກໃນປີ 2011
# ຕາຕະລາງການຄໍານວນສໍາລັບໂຄງການຊ່ວຍເຫລືອຜູ້ສູງອາຍຸແລະຜູ້ພິການຂອງ FPL

| | | |
|---|---|---|
| ລາຍໄດ້ທີ່ບໍ່ແມ່ນມາຈາກວຽກ | $________ | |
| ຫັກອອກ $20 ຂອງຈໍານວນລາຍໄດ້ໃດໆ | (__20.00__) | |
| ຈໍານວນລວມຂອງລາຍໄດ້ທີ່ບໍ່ແມ່ນມາຈາກວຽກ | | $________ |
| ລວມຍອດລາຍໄດ້ທີ່ໄດ້ຮັບຈາກວຽກ | $________ | |
| ຫັກອອກຈໍານວນຄົງເຫລືອ $20 | (________) | |
| ຫັກອອກ $65 ຂອງລາຍໄດ້ທີ່ໄດ້ຮັບຈາກວຽກ | (__65.00__) | |
| ຍອດລວມຍ່ອຍ | ________ | |
| ຫັກອອກ 50% | (________) | |
| ລາຍໄດ້ທີ່ໄດ້ຮັບຈາກວຽກທີ່ນັບໄດ້ລວມ | | ________ |
| ຍອດລວມຂອງລາຍໄດ້ທີ່ນັບໄດ້ທີ່ໄດ້ຮັບຈາກວຽກ/ທີ່ບໍ່ແມ່ນຈາກວຽກ | | ________ |
| ລົບ ຄ່າງວດປະກັນພັຍສຸຂະພາບຈໍານວນໃດໆ | | (________) |
| ລົບ ເງິນຊ່ວຍເຫລືອຄ່າໃຊ້ຈ່າຍຈໍາເປັນ ສໍາລັບຄອບຄົວທີ່ມີສະມາຊິກທີ່ບໍ່ແມ່ນເດັກຜູ້ພິການ – ເຊັ່ນ ຖ້າວ່າມີ 4 ຄົນໃນຄອບຄົວທີ່ມີເດັກພິການ, ໃຫ້ນໍາໃຊ້ເງິນຊ່ວຍເຫລືອຄ່າໃຊ້ຈ່າຍຈໍາເປັນສໍາລັບ 3 | | (________) |
| ບວກ ລາຍໄດ້ຂອງຕົວເດັກເອງ ເຊັ່ນເງິນຊ່ວຍເຫລືອຈາກປະກັນສັງຄົມສໍາລັບຜູ້ຢູ່ພາຍໃຕ້ການດູແລ (Social Security dependent) ແລະສອງໃນສາມຂອງລາຍໄດ້ທີ່ເປັນເງິນຄ່າລ້ຽງລູກ | | ________ |
| ເງິນຄົງເຫລືອແມ່ນຈໍານວນຂອງລາຍໄດ້ທີ່ຖືວ່າເປັນຂອງເດັກຄື: | | $________ |

ຈໍານວນເງິນນັ້ນເທົ່າກັບ ຫລືໜ້ອຍກວ່າ 100% ຂອງລະດັບຄວາມທຸກຍາກທີ່ຣັຖບານກາງກໍານົດໄວ້ສໍາລັບບຸກຄົນໜຶ່ງ ($908 ໃນປີ 2011) ບວກເງິນຫັກລົດພິເສດ $230 ແມ່ນບໍ່?
ຖ້າແມ່ນ ເດັກກໍ່ມີສິດໄດ້ຮັບ.

*ເງິນຊ່ວຍເຫລືອຄ່າໃຊ້ຈ່າຍຈໍາເປັນ:* 1 - $600, 2 - $750, ຜູ້ໃຫຍ່ 2 ຄົນ - $934, 3 - $934, 4 - $1100, 5 - $1259, 6 - $1417, 7 - $1550, 8 - $1692